**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ເຈົ້າແຂວງ

ເລກທີ..[illegible]../ຈຂ.ບກ

ບໍ່ແກ້ວ, ວັນທີ..4..[illegible]..2017.

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງປ່າສະຫງວນ ຂອງແຂວງ

- **ອີງຕາມ** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- **ອີງຕາມ** ກົດໝາຍວ່າດ້ວຍປ່າໄມ້ ເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- **ອີງຕາມ** ດຳລັດວ່າດ້ວຍປ່າສະຫງວນ ເລກທີ 134/ລບ, ລົງວັນທີ 13 ພຶດສະພາ 2015.

**ເຈົ້າແຂວງແຂວງບໍ່ແກ້ວ ຕົກລົງ:**

## ໝວດທີ 1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ, ມາດຕະການ, ຂອບເຂດຄວາມຮັບຜິດຊອບກ່ຽວກັບການຄຸ້ມຄອງ, ການປົກປົກຮັກສາ ແລະ ນຳໃຊ້ເນື້ອທີ່ປ່າສະຫງວນຂອງແຂວງ, ແນໃສ່ຜັນຂະຫຍາຍເນື້ອໃນຂອງກົດໝາຍປ່າໄມ້, ດຳລັດກ່ຽວກັບປ່າສະຫງວນ ມາເປັນອັນສະເພາະ ນຳໃຊ້ໃຫ້ສອດຄ່ອງ ແລະ ແທດເໝາະກັບຈຸດພິເສດ, ຂອບເຂດຄວາມຮັບຜິດຊອບ ໃນການຄຸ້ມຄອງປ່າສະຫງວນຂອງແຂວງ ເພື່ອປົກປັກຮັກສາ ແລະ ຟື້ນຟູປ່າໄມ້ໃຫ້ກາຍເປັນເຂດສີຂຽວອ້ອມຮອບຕົວເມືອງຫ້ວຍຊາຍ.

### ມາດຕາ 2 ການຄຸ້ມຄອງປ່າສະຫງວນ

**ປ່າສະຫງວນ** ແມ່ນປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ໄດ້ກຳນົດໄວ້ ເພື່ອອະນຸລັກທຳມະຊາດ, ປົກປັກຮັກສາພັນພືດ, ພັນສັດ, ລະບົບນິເວດປ່າໄມ້ ແລະ ສິ່ງ

ຕ່າງໆທີ່ມີຄ່າທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນະທຳ, ການທ່ອງທ່ຽວ, ສິ່ງແວດລ້ອມ, ການສຶກສາ ແລະ ການຄົ້ນຄ້ວາ-ທົດລອງວິທະຍາສາດ.

**ການຄຸ້ມຄອງປ່າສະຫງວນ** ແມ່ນການດຳເນີນກິດຈະການຕ່າງໆຢູ່ໃນປ່າສະຫງວນ ເຊັ່ນ: ການສຳຫລວດ, ການປົກປັກຮັກສາ, ການວາງແຜນຈັດສັນ, ການຄົ້ນຄວ້າ-ທົດລອງ, ການນຳໃຊ້ຜະລິດຕະພົນຈາກປ່າສະຫງວນໃຫ້ໄປຕາມແຜນຈັດສັນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທີ່ດິນປ່າສະຫງວນ** ໝາຍເຖິງທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຫຸ້ມ, ລວມທັງສາຍນ້ຳ, ຫ້ວຍ, ຮ່ອງ, ຄອງ, ບຶງ, ໜອງນ້ຳ, ທີ່ດິນບໍລິເວນນ້ຳ ແລະ ອື່ນໆ ທີ່ລັດໄດ້ກຳນົດໃຫ້ເປັນທີ່ດິນປ່າສະຫງວນ;
2. **ການພັດທະນາປ່າສະຫງວນ** ໝາຍເຖິງທຸກການເຄື່ອນໄຫວ ຢູ່ໃນຂອບເຂດປ່າສະຫງວນ ເພື່ອຟື້ນຟູບູລະນະປ່າໄມ້ ແລະ ທີ່ດິນປ່າໄມ້ ລວມທັງຊີວະນາງພັນຕາມທຳມະຊາດ ດ້ວຍການນຳໃຊ້ເຕັກນິກວິທະຍາສາດ ແນໃສ່ອະນຸລັກສິ່ງແວດລ້ອມ, ລະບົບນິເວດ, ພັນພືດ, ພັນສັດນ້ຳ-ສັດປ່າ, ວັດທະນະທຳ, ຮ່ອງຮອຍປະຫວັດສາດ ແລະ ສິ່ງທີ່ມີຄຸນຄ່າຢູ່ໃນທີ່ດິນຂອບເຂດປ່າສະຫງວນ;
3. **ການຟື້ນຟູປ່າໄມ້ແບບທຳມະຊາດ** ໝາຍເຖິງການຂະຫຍາຍພັນດ້ວຍແກ່ນ, ຮາກເຫງົ້າ ຫຼື ຕໍໄມ້ ຕາມທຳມະຊາດຂອງພັນໄມ້ຊະນິດຕ່າງໆ ທີ່ເກີດຢູ່ໃນເຂດຟື້ນຟູປ່າໄມ້ ໂດຍການອະນາໄມພື້ນລ່າງ ແລະ ຕັດສາງຕົ້ນໄມ້ໃຫ້ມີການຂະຫຍາຍຕົວ;
4. **ການຟື້ນຟູປ່າໄມ້ແບບປູກເສີມ** ໝາຍເຖິງການປູກເສີມພັນໄມ້ຊະນິດຕ່າງໆ ທີ່ເຫັນວ່າເໝາະສົມ ໂດຍສອດຄ່ອງຕາມຈຸດປະສົງ ແລະ ເປົ້າໝາຍຂອງການຟື້ນຟູປ່າໄມ້ຢູ່ໃນເຂດຟື້ນຟູປ່າໄມ້ທຳມະຊາດ, ໂດຍສະເພາະບ່ອນທີ່ມີຄວາມໜາແໜ້ນຂອງຕົ້ນໄມ້ຕ່ຳ, ບ່ອນທີ່ມີການກະຈາຍຂອງຊະນິດພັນໄມ້ທີ່ເກີດຕາມທຳມະຊາດບໍ່ສະໝ່ຳສະເໝີ ຫຼື ບາງຊະນິດພັນໄມ້ດັ້ງເດີມ ທີ່ມີຢູ່ໃນເຂດດັ່ງກ່າວ ທີ່ມີຄວາມສ່ຽງໃນການສູນພັນ ຫຼື ຖືກດັບສູນແລ້ວ ແຕ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ຮັບການຟື້ນຟູຄືນ;
5. **ຊັບພະຍາກອນປ່າໄມ້** ໝາຍເຖິງຊັບພະຍາກອນຕ່າງໆ ທີ່ມີຊີວິດ ແລະ ບໍ່ມີຊີ...

ວິດ ເຊິ່ງປະກອບດ້ວຍດິນ, ນ້ຳ, ພືດພັນ, ຕົ້ນໄມ້, ສັດນ້ຳ-ສັດປ່າ ແລະ ອື່ນໆ ທີ່ມີທັງໝົດຢູ່ໃນເຂດທີ່ດິນປ່າໄມ້;

6. **ຊີວະນາໆພັນ** ໝາຍເຖິງຄວາມຫຼາກຫຼາຍຂອງລະບົບນິເວດ, ຊະນິດແນວພັນຂອງສິ່ງທີ່ມີຊີວິດ ເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີ ທີ່ມີຢູ່ໃນຂອບເຂດທຳ ມະຊາດໃດໜຶ່ງ;
7. **ວັງສະຫງວນ** ໝາຍເຖິງຂອບເຂດຂອງແມ່ນ້ຳ, ລຳເຊ, ຫ້ວຍນ້ຳ, ໜອງນ້ຳທຳມະຊາດທີ່ຖືກກຳນົດໂດຍອົງການຈັດຕັ້ງ ຫຼື ອົງການປົກຄອງທ້ອງຖິ່ນ ເພື່ອປົກປັກຮັກສາຖິ່ນທີ່ຢູ່ອາໄສ, ບ່ອນຂະຫຍາຍພັນຂອງສັດນ້ຳ. ການຊົມໃຊ້ຊັບພະຍາກອນສັດນ້ຳຢູ່ໃນເຂດດັ່ງກ່າວຕ້ອງປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ;
8. **ທີ່ດິນປ່າໄມ້** ໝາຍເຖິງເນື້ອທີ່ດິນທຸກຕອນ ທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຫຸ້ມຢູ່ເຊິ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້;
9. **ປ່າຟື້ນຟູ** ໝາຍເຖິງປ່າໄມ້ທີ່ຢູ່ໃນສະພາບເຊື່ອມໂຊມ ເຊັ່ນ: ປ່າເຫຼົ່າອ່ອນທີ່ໄດ້ຈັດແບ່ງໄວ້ເພື່ອຟື້ນຟູ, ບູລະນະໃຫ້ກາຍເປັນປ່າເຫຼົ່າແກ່ ແລະ ກາຍເປັນປ່າທຳມະຊາດທີ່ສົມບູນຄືນໄດ້;
10. **ປ່າເຫຼົ່າ** ໝາຍເຖິງເຂດເນື້ອທີ່ປ່າໄມ້ທີ່ມີການຖາງປ່າເຮັດໄຮ່ ຫຼື ຖືກບຸກລຸກທຳລາຍດ້ວຍຮູບການຕ່າງໆເປັນເວລາຫຼາຍປີມາແລ້ວ, ເຂດດັ່ງກ່າວສາມາດມີໂອກາດກາຍເປັນປ່າທຳມະຊາດທີ່ອຸດົມສົມບູນໄດ້;
11. **ປ່າຊົມໃຊ້ຂອງບ້ານ** ໝາຍເຖິງປ່າໄມ້ໃນຂອບເຂດຂອງບ້ານ ທີ່ລັດໄດ້ມອບໃຫ້ອົງການປົກຄອງບ້ານເປັນຜູ້ຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ຕາມແຜນການມອບດິນ-ມອບປ່າ;
12. **ປ່າໄມ້ທຳມະຊາດ** ໝາຍເຖິງປ່າໄມ້ທີ່ມີພັນໄມ້ ແລະ ເຄືອງປ່າຂອງດົງເກີດຂຶ້ນ ແລະ ຂະຫຍາຍພັນດ້ວຍຕົວມັນເອງຕາມທຳມະຊາດເປັນຕົ້ນຕໍ;
13. **ເຂດປ່າຍອດນ້ຳ** ໝາຍເຖິງເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ເຊິ່ງເປັນບໍລິເວນຕົ້ນກຳເນີດຂອງສາຍນ້ຳ ເຊິ່ງກວມເອົາເຂດອ່າງໂຕ່ງ;
14. **ເຂດເຊື່ອມຕໍ່** ໝາຍເຖິງບໍລິເວນທີ່ດິນປ່າໄມ້ ອ້ອມຮອບຂອບບໍລິເວນທີ່ດິນປ່າສະຫງວນ ເພື່ອປ້ອງກັນການບຸກລຸກໂດຍກົງເຂົ້າປ່າສະຫງວນ;
15. **ບ້ານ** ໝາຍເຖິງຫົວໜ່ວຍການປົກຄອງຮາກຖານ ລວມທັງກຸ່ມບ້ານ.

**ມາດຕາ 4 ນະໂຍບາຍຂອງລັດຕໍ່ກັບການຄຸ້ມຄອງປ່າສະຫງວນແ**

ລັດມີນະໂຍບາຍສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ຟື້ນຟູບູລະນະປ່າໄມ້ທຳມະຊາດ ແລະ ປູກໄມ້ໃນທີ່ດິນປ່າສະຫງວນ ເພື່ອປົກປັກຮັກສາສິ່ງແວດລ້ອມ ໂດຍຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ສົ່ງເສີມໃຫ້ມີການນຳໃຊ້ໂດຍທາງອ້ອມ ເຊັ່ນ: ໃຊ້ເປັນສະຖານທີ່ພັກຜ່ອນ, ແຫຼ່ງທ່ອງທ່ຽວ, ບ່ອນສຶກສາຄົ້ນຄ້ວາ ແລະ ອື່ນໆ ຢູ່ໃນເຂດທີ່ຈັດສັນໃຫ້ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 5 ກຳມະສິດກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້

ປ່າໄມ້ທຳມະຊາດ ແລະ ທີ່ດິນປ່າໄມ້ ເປັນກຳມະສິດຂອງວົງຄະນາຍາດແຫ່ງຊາດ ໂດຍແມ່ນລັດເປັນຕົວແທນໃນການຄຸ້ມຄອງຢ່າງລວມສູນ, ເປັນເອກະພາບສຳລັບຕົ້ນໄມ້ທີ່ບຸກຄົນ ຫຼື ການຈັດຕັ້ງໄດ້ປູກຕາມເຂດທີ່ໄດ້ຈັດສັນໃຫ້ດ້ວຍເຫື່ອ ແຮງ ຫຼື ທຶນຮອນຂອງຕົນ ໂດຍການຮັບຮູ້ຈາກອົງການຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ ແມ່ນກຳມະສິດຂອງຜູ້ປູກ.

### ມາດຕາ 6 ຫຼັກການຄຸ້ມຄອງປ່າສະຫງວນ

ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າສະຫງວນ ແລະ ທີ່ດິນປ່າສະຫງວນ ໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ແຜນຍຸດທະສາດວຽກງານປ່າໄມ້ຂອງແຂວງ;
2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວແຂວງ;
3. ຮັບປະກັນການປົກປັກຮັກສາ, ການພັດທະນາ, ການປັບປຸງຄຸນນະພາບຂອງດິນ, ການຟື້ນຟູບູລະນະປ່າໄມ້ໃຫ້ມີຄວາມອຸດົມສົມບູນ, ມີຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ;
4. ຮັບປະກັນ ການມີສ່ວນຮ່ວມຂອງປະຊາຊົນ.

### ມາດຕາ 7 ຂອບເຂດການນຳໃຊ້ຂໍ້ຕົກລົງ

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ, ການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ທີ່ກ່ຽວຂ້ອງກັບການຄຸ້ມຄອງ, ຊົມໃຊ້ ປ່າສະຫງວນຂອງແຂວງບໍ່ແກ້ວ.

## ໝວດທີ 2

## ຂອບເຂດ, ທີ່ຕັ້ງ ແລະ ອົງປະກອບຂອງປ່າສະຫງວນ

**ມາດຕາ 8 ຂອບເຂດລວມຂອງປ່າສະຫງວນຂອງແຂວງ**

ປ່າສະຫງວນແຂວງບໍ່ແກ້ວ ແບ່ງເປັນ 2 ເຂດ, ລວມມີເນື້ອທີ່ທັງໝົດ 9.604 ເຮັກຕາ, ເຫັງສອງເຂດແມ່ນນອນຢູ່ໃນເມືອງຫ້ວຍຊາຍ ແລະ ມີບ້ານຢູ່ອ້ອມຂ້າງຈຳນວນ 30 ບ້ານ ຄື:

**ເຂດທີ** 1: ປ່າສະຫງວນຫ້ວຍຕາບ-ພູຈອມແກ້ວ-ພູ 106 ຕິດກັບຂອບເຂດຂອງບ້ານ ຈຳນວນ 13 ບ້ານ ຄື: ບ້ານສີບຸນເຮືອງ, ບ້ານໃຫຍ່ຫ້ວຍຊາຍໃຕ້, ບ້ານໃຫຍ່ຫ້ວຍຊາຍເໜືອ, ບ້ານຂອນແກ້ວ, ບ້ານໜອງຊາຍ, ບ້ານຫ້ວຍມ່ອນ, ບ້ານຫ້ວຍຕາບ, ບ້ານປາກ ງາວ, ບ້ານນ້ຳແລ, ບ້ານຫ້ວຍສາລາ, ບ້ານຊຽງງາມ, ບ້ານທົ່ງແສງຈັນ ແລະ ບ້ານໃໝ່ພູຄາ;

**ເຂດທີ** 2: ປ່າສະຫງວນຫ້ວຍປະຕູທຳ-ພູຈອມຈຸກ ຕິດກັບຂອບເຂດຂອງບ້ານ ຈຳນວນ 17 ບ້ານ ຄື: ບ້ານນ້ຳຕອຍ, ບ້ານໄຊຈະເລີນ, ບ້ານທົ່ງແສງຈັນ, ບ້ານຈອມຈຸກ, ບ້ານນ້ຳຄຳ, ບ້ານຫົວຂົວ, ບ້ານປາກຮາວໃຕ້, ບ້ານວຽງໃໝ່, ບ້ານດອນ, ບ້ານຫ້ວຍທຸຍ, ບ້ານຫ້ວຍຈອດ, ບ້ານໂພນໄຊ, ບ້ານໂພນສະຫວ່າງ, ບ້ານດ່ານຖິ່ນ, ບ້ານ ຫ້ວຍຊາຍນ້ອຍ, ບ້ານໄຊຈະເລີນ ແລະ ບ້ານຝາຍ.

**ມາດຕາ 9 ທີ່ຕັ້ງຂອງປ່າສະຫງວນ**

- **ປ່າສະຫງວນ ເຂດທີ** 1: ປ່າສະຫງວນຫ້ວຍຕາບ-ພູຈອມແກ້ວ-ພູ 106 ມີເນື້ອທີ່ **5.686 ເຮັກຕາ.**
  - **ທິດເໜືອ** ຕິດກັບຂອບເຂດບ້ານນ້ຳແລ ແລະ ສາຍນ້ຳງາວ, ຈຸດພິກັດ N654117; E2255883;
  - **ທິດໃຕ້** ຕິດກັບຂອບເຂດບ້ານໃຫຍ່ຫ້ວຍຊາຍໃຕ້, ບ້ານໃຫຍ່ຫ້ວຍຊາຍເໜືອ ແລະ ບ້ານສີບຸນເຮືອງ, ຈຸດພິກັດ N649095; E2242506;
  - **ທິດຕາເວັນອອກ** ຕິດກັບຂອບເຂດບ້ານຫ້ວຍສາລາ, ຈຸດພິກັດ N655232, E2253261;
  - **ທິດຕາເວັນຕົກ** ຕິດກັບຂອບເຂດບ້ານຫ້ວຍຕາບ ແລະ ບ້ານຫ້ວຍມ່ອນ, ຈຸດພິກັດ N646544, E2246591;

- **ປ່າສະຫງວນເຂດທີ 2**: ປ່າສະຫງວນພູຈອມຈຸກ-ປະຕູຫໍ ມີເນື້ອທີ່ **3.918** ເຮັກຕາ.
  - **ທິດເໜືອ** ຕິດກັບ**ຂອບ**ເຂດບ້ານຫ້ວຍຊາຍນ້ອຍ, ບ້ານຝາຍ ແລະ ອ່າງນ້ຳຕິນ, ຈຸດພິກັດ N661345, E2241691;
  - **ທິດໃຕ້** ຕິດກັບແມ່ນ້ຳຂອງ, ຈຸດພິກັດ N657323, E2231931;
  - **ທິດຕາເວັນອອກ** ຕິດກັບທົ່ງພ້າວຫ້າວ ເຂດດ່ານຖົ່ນ, ຈຸດພິກັດ N661919, E2240455;
  - **ທິດຕາເວັນຕົກ** ຕິດກັບ**ຂອບ**ເຂດບ້ານດອນ, ບ້ານປາກຮາວໃຕ້ ແລະ ບ້ານຈອມຈຸກ, ຈຸດພິກັດ N653305, E2234720.

**ມາດຕາ 10 ອົງປະກອບຂອງປ່າສະຫງວນຂອງແຂວງ.**

**ປ່າສະຫງວນຫ້ວຍຕາບ-ພູຈອມແກ້ວ-ພູ 106** ມີເນື້ອທີ່ 5.686 ເຮັກຕາ, ເນື້ອທີ່ສ່ວນຫຼາຍເປັນພູດອຍ ເຊິ່ງປະກອບດ້ວຍປ່າແຫຼ່ງແກ່ນພັນໄມ້ດູ່ ມີເນື້ອທີ່ 129,39 ເຮັກຕາ, ມີປ່າປະສົມທີ່ບໍ່ທັນຜ່ານການບຸກເບີກ ຕາມເຂດແຄມຫ້ວຍ ແລະ ຍອດນ້ຳ ສ່ວນຫຼາຍເປັນປ່າເລົ່າແກ່ 20-25 ປີ, ເນື້ອທີ່ຈຳນວນໜຶ່ງເປັນບ່ອນທຳການຜະລິດ ແລະ ລ້ຽງສັດຂອງປະຊາຊົນ. ມີແຫຼ່ງນ້ຳສຳຄັນ ຄື: ນ້ຳງາວ, ຫ້ວຍຕາບ, ຫ້ວຍກາງ, ຫ້ວຍສົ້ມປ່ອຍ, ຫ້ວຍນ້ຳຊຸ່ນ ແລະ ຫ້ວຍສາລາ. ມີສະຖານທີ່ສຳຄັນ ຄື: ຄ້າຍທະຫານເກົ່າພູຈອມແກ້ວ, ທໍ່ເທວະດາເມືອງເກົ່າ, ຄ້າຍທະຫານພູ106, ເຂດຂຸດຄົ້ນແຮ່ແກ້ວປະເສີດ, ເຂດຈະສ້າງພະເຈົ້າໃຫຍ່ຂອງ ແຂວງ ພູ106.

**ປ່າສະຫງວນພູຈອມຈຸກ-ປະຕູຫໍ** ມີເນື້ອທີ່ 3.918 ເຮັກຕາ, ເນື້ອທີ່ສ່ວນຫຼາຍເປັນພູດອຍ ປະກອບດ້ວຍປ່າໄມ້ທຳມະຊາດທີ່ຍັງອຸດົມສົມບູນ, ເປັນປ່າປະສົມທີ່ມີຄວາມຫຼາກຫຼາຍຊີວະນາໆພັນ, ເນື້ອທີ່ຈຳນວນໜຶ່ງເປັນທີ່ດິນທຳການຜະລິດ ແລະ ລ້ຽງສັດຂອງປະຊາຊົນ, ມີແຫຼ່ງນ້ຳສຳຄັນ ຄື: ນ້ຳຄຳ, ຫ້ວຍບອນ, ຫ້ວຍສ່ອຍ, ຫ້ວຍເຢັນ ແລະ ຫ້ວຍທຸຍ. ມີສະຖານທີ່ສຳຄັນ ຄື: ຕາດຫ້ວຍສ່ອຍ, ຕາດຫ້ວຍເຢັນ, ຕາດຫ້ວຍບອນ, ຄ້າຍເກົ່າທະຫານໄທ.

## ໝວດທີ 3
## ການປົກປັກຮັກສາປ່າສະຫງວນ

**ມາດຕາ 11 ການປົກປັກຮັກສາປ່າສະຫງວນ**

ການປົກປັກຮັກສາປ່າສະຫງວນຂອງແຂວງ 2 ແຫ່ງດັ່ງກ່າວ ແມ່ນເພື່ອອະນຸລັກ, ປົກປັກສາຮັກສາ, ຟື້ນຟູ ແລະ ພັດທະນາໃຫ້ກາຍເປັນເຂດສີຂຽວອ້ອມຮອບຕົວເມືອງຫ້ວຍຊາຍ, ເປັນມໍລະດົກທາງດ້ານທຳມະຊາດ, ປະຫວັດສາດ ແລະ ກາຍເປັນແຫຼ່ງທ່ອງທ່ຽວທຳມະຊາດທີ່ຍືນຍົງ; ບຸກ ຄົນ, ນິຕິບຸກຄົນທີ່ໄດ້ນຳໃຊ້ເນື້ອທີ່ດິນ, ໄດ້ປູກໄມ້ອຸດສາຫະກຳ, ໄມ້ໃຫ້ໝາກ ແລະ ເຮັດນາ ຢູ່ໃນຂອບເຂດປ່າສະຫງວນສອງແຫ່ງນີ້ມາກ່ອນ ແມ່ນອະນຸຍາດໃຫ້ສືບຕໍ່ປົກປັກຮັກສາໄມ້ປູກຂອງຕົນໃຫ້ກາຍເປັນປ່າສີຂຽວ ແລະ ສາມາດຊົມໃຊ້ຜົນຜະລິດໄດ້ຕາມເງື່ອນໄຂຕົວຈິງ ແຕ່ຕ້ອງໄດ້ຮັບການອະນຸຍາດຈາກອົງການຄຸ້ມຄອງປ່າສະຫງວນຂອງແຂວງ.

**ມາດຕາ 12 ການຈັດສັນແບ່ງເຂດໃນປ່າສະຫງວນ.**

ປ່າສະຫງວນຂອງແຂວງໄດ້ກຳນົດ ແລະ ຈັດສັນໃຫ້ມີເຂດຫວງຫ້າມເດັດຂາດ ແລະ ເຂດຄຸ້ມຄອງນຳໃຊ້, ເຂດເຊື່ອມຕໍ່ລະຫວ່າງປ່າສະຫງວນດ້ວຍກັນ ຫຼື ລະຫວ່າງປ່າສະຫງວນກັບປ່າປະເພດອື່ນ ດັ່ງນີ້:

1) ເຂດຫວງຫ້າມເດັດຂາດ ແມ່ນເຂດປ່າໄມ້ເຊິ່ງເປັນບ່ອນອາໄສຫາກິນ ແລະຂະຫຍາຍພັນຕົ້ນຕໍຂອງສັດປ່າ, ເປັນບ່ອນທີ່ມີພັນພືດຈຳນວນຫຼວງຫຼາຍ ແລະດົກໜາ. ໃນເຂດນີ້ບໍ່ອະນຸຍາດໃຫ້ດຳເນີນກິດຈະການປ່າໄມ້, ເກັບກູ້ຜະລິດຕະຜົນປ່າໄມ້ ຫຼື ເຂົ້າໄປດຳເນີນກິດຈະການໃດໆ ຢ່າງເດັດຂາດ;

2) ເຂດຊົມໃຊ້ຊັບພະຍາກອນປ່າໄມ້ ແມ່ນບໍລິເວນປ່າທີ່ອະນຸຍາດໃຫ້ປະຊາຊົນນຳໃຊ້ໄມ້ສຳລັບໃຊ້ສອຍໃນຄອບຄົວ, ການເກັບກູ້ເຄື່ອງປ່າຂອງດົງແບບຍືນນານ ແລະ ການລ່າສັດນ້ຳ-ສັດປ່າ ປະເພດບໍ່ຫວງຫ້າມ ຖືກຕ້ອງຕາມລະດູການ ແລະ ບໍ່ມີລັກສະນະດັບສູນ;

3) ເຂດທຳການຜະລິດກະສິກຳ ແມ່ນເຂດທີ່ຖືກຈັດສັນໃຫ້ປະຊາຊົນພາຍໃນບ້ານທີ່ມີຂອບເຂດຕິດກັບປ່າສະຫງວນ ສາມາດນຳໃຊ້ເຂົ້າໃນການປູກໄມ້ອຸດສາຫະ ກຳ, ໄມ້ຟືນ, ໄມ້ໃຫ້ໝາກ, ລ້ຽງລັດ ເພື່ອໃຫ້ມີອາຊີບຄົງທີ່ ບໍ່ຖາງປ່າເຮັດໄຮ່ເລື່ອນລອຍ. ເຂດດັ່ງກ່າວມີຄວາມຄ້ອຍຊັນບໍ່ເກີນ 35 ອົງສາ;

4) ເຂດພັດທະນາເສດຖະກິດ-ສັງຄົມ ແມ່ນເຂດທີ່ກຳນົດໄວ້ ເພື່ອດຳເນີນກິດຈະການຕ່າງໆ ທີ່ທາງລັດຖະບານໄດ້ອະນຸມັດເຊັ່ນ: ສ້າງເຂື່ອນໄຟຟ້າ, ຂຸດ

ຄົ້ນບໍ່ແຮ່, ແຫຼ່ງທ່ອງທ່ຽວທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ທີ່ເຫັນວ່າມີຜົນປະໂຫຍດອັນໃຫຍ່ຫຼວງຕໍ່ແຂວງ ໂດຍຜ່ານການສຶກສາຄົ້ນຄ້ວາ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.

ສຳລັບເຂດເຊື່ອມຕໍ່ລະຫວ່າງປ່າສະຫງວນດ້ວຍກັນ ຫຼື ລະຫວ່າງປ່າສະຫງວນກັບປ່າປະເພດອື່ນ ແມ່ນບໍລິເວນທີ່ຢູ່ອ້ອມຮອບຂອບເຂດຂອງປ່າສະຫງວນ, ເປັນເຂດປ້ອງກັນການບຸກລຸກໂດຍກົງເຂົ້າຫາປ່າສະຫງວນ.

**ມາດຕາ 13 ການທົບທວນປ່າສະຫງວນ ຂອງແຂວງ.**

ກໍລະນີມີຄວາມຈຳເປັນຕ້ອງໄດ້ທົບທວນເຂດແດນປ່າສະຫງວນ, ອົງການຄຸ້ມຄອງປ່າສະຫງວນຕ້ອງໄດ້ເຮັດບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການຈັດສັນປ່າສະຫງວນ, ປ່າປ້ອງກັນ, ປ່າຊົມໃຊ້ ແລະ ຜົນຂອງການສຶກສາຄົ້ນຄວ້າກ່ຽວກັບຄວາມຈຳເປັນຕ້ອງໄດ້ທົບທວນເຂດແດນປ່າສະຫງວນ ຕໍ່ເຈົ້າແຂວງ ເພື່ອສະເໜີຕໍ່ສະພາປະຊາຊົນແຂວງພິຈາລະນາຮັບຮອງ ແລະ ຕົກລົງຢ່າງເປັນທາງການ.

## ໝວດທີ 4
## ກອງທຶນພັດທະນາປ່າສະຫງວນ

**ມາດຕາ 14 ແຫຼ່ງທຶນພັດທະນາປ່າສະຫງວນ**

ແຫຼ່ງທຶນພັດທະນາປ່າສະຫງວນ ໄດ້ມາຈາກ:

1. ກອງທຶນພັດທະນາປ່າສະຫງວນ;
2. ງົບປະມານຂອງລັດ;
3. ຄ່າບໍລິການເຂົ້າໄປທ່ຽວຊົມໃນເຂດປ່າສະຫງວນ;
4. ສ່ວນແບ່ງຈາກຄ່າປັບໃໝ ຜູ້ກະທຳຜິດລະບຽບການຄຸ້ມຄອງປ່າສະຫງວນ;
5. ພັນທະ, ຄ່າທຳນຽມຈາກການດຳເນີນກິດຈະການ ຫຼື ທຸລະກິດ ຢູ່ໃນເຂດປ່າສະຫງວນ ເຊັ່ນ: ການສ້າງເຂື່ອນໄຟຟ້ານ້ຳຕົກ, ແຫຼ່ງນ້ຳປະປາ, ການສ້າງສາລະຄະດີພາບຖ່າຍຕ່າງໆ ແລະ ກິດຈະການອື່ນໆທີ່ໄດ້ຮັບອະນຸຍາດ;
6. ການປະກອບສ່ວນຂອງບຸກຄົນ, ລວມໝູ່, ການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ອື່ນໆ.

**ມາດຕາ 15 ການນຳໃຊ້ທຶນພັດທະນາປ່າສະຫງວນ ຂອງແຂວງ**

ທຶນພັດທະນາປ່າສະຫງວນ ໃຫ້ນຳໃຊ້ເຂົ້າວຽກງານຄຸ້ມຄອງປ່າສະຫງວນຂອງແຂວງເປັນຕົ້ນ: ວຽກງານຈັດສັນປ່າສະຫງວນ, ກວດກາລາດຕະເວນ, ປ້ອງກັນໄຟໄໝ້ລາມປ່າ, ວຽກໂຄສະນາເຜີຍແຜ່ລະບຽບການ, ກົດໝາຍ ແລະ ວຽກບໍລິຫານຫ້ອງການປ່າສະຫງວນ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 16 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງມີພຶດຕິກຳດັ່ງນີ້:

1. ດຳເນີນການຂຸດຄົ້ນໄມ້ທຸກຊະນິດ, ຂຸດຄົ້ນບໍ່ແຮ່, ສ້າງເຂື່ອນເກັບນ້ຳ, ກໍ່ສ້າງບໍລິສັດ ກິດຈະການຕ່າງໆ, ສ້າງຖະໜົນຫົນທາງ, ເກັບກູ້ເຄື່ອງປ່າຂອງດົງ, ລ່າສັດນ້ຳ-ສັດປ່າ, ຕັດຕົ້ນໄມ້, ເຄື່ອນຍ້າຍພັນພືດ, ພັນສັດ ແລະ ດຳເນີນກິດຈະການອື່ນໆໃນເຂດຫວງຫ້າມເດັດຂາດ ແລະ ເຂດເຊື່ອມຕໍ່ຂອງປ່າສະຫງວນຂອງແຂວງ;
2. ຈັບຈອງ, ຊື້-ຂາຍເນື້ອທີ່ດິນ, ເຂົ້າຕັ້ງບ້ານເຮືອນ, ບຸກເບີກຂະຫຍາຍເນື້ອທີ່, ການຖາງປ່າເຮັດໄຮ່, ຕັດຕົ້ນໄມ້-ເຜົາຖ່ານ ແລະ ອື່ນໆ ໃນຂອບເຂດທີ່ກຳນົດເປັນພື້ນທີ່ປ່າສະຫງວນ ແລະ ເຂດເຊື່ອມຕໍ່;
3. ທຳການຂຸດຄົ້ນ, ຂຸດເຈາະ ຫຼື ຍົກຍ້າຍວັດຖຸບູຮານ, ວັດຖຸທີ່ມີຄຸນຄ່າທາງດ້ານປະຫວັດສາດ, ວັດທະນະທຳ ໃນຂອບເຂດປ່າສະຫງວນ;
4. ນຳເອົາສິ່ງເປິະເປື້ອນ, ທາດເປັນພິດ, ສານເຄມີ ທີ່ຈະເປັນອັນຕະລາຍຕໍ່ແຫຼ່ງນ້ຳ, ປ່າໄມ້, ສັດນ້ຳ-ສັດປ່າ ແລະ ສິ່ງແວດລ້ອມ ເຂົ້າໄປໃນຂອບເຂດປ່າສະຫງວນ ແລະ ເຂດເຊື່ອມຕໍ່ຢ່າງເດັດຂາດ;
5. ເຄື່ອນຍ້າຍ ຫຼື ປ່ຽນແປງປ້າຍຫຼັກໝາຍເຂດແດນ ແລະ ເຄື່ອງໝາຍອື່ນໆທີ່ກ່ຽວຂ້ອງກັບວຽກງານປ່າສະຫງວນ.

**ມາດຕາ 17 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ປ່າໄມ້**

1. ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ຈາກການຄຸ້ມຄອງປ່າສະຫງວນຢ່າງເດັດຂາດ;

2. ປະຕິບັດໜ້າທີ່ດ້ວຍຄວາມບໍ່ຍຸຕິທຳ, ລຳອຽງຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມາເຄື່ອນໄຫວຢູ່ໃນປ່າສະຫງວນ;
3. ເມີນເສີຍຕໍ່ການປະຕິບັດໜ້າທີ່, ຕໍ່ການຮ້ອງທຸກ, ກົດໜ່ວງ, ທ່ວງດຶງເອກະສານ, ຮັບສິນບົນ;
4. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6

## ການຄຸ້ມຄອງ ແລະ ກວດກາວຽກງານປ່າສະຫງວນຂອງແຂວງ

**ມາດຕາ 18 ອົງການຄຸ້ມຄອງປ່າສະຫງວນຂອງແຂວງ.**

ການຄຸ້ມຄອງປ່າສະຫງວນຂອງແຂວງ ໂດຍແມ່ນລັດ (ອົງການປົກຄອງແຂວງ) ເປັນຜູ້ຄຸ້ມຄອງຢ່າງລວມສູນ ໂດຍມອບໃຫ້ພາກສ່ວນກ່ຽວຂ້ອງເປັນຕົວແທນໃນການຄຸ້ມຄອງ ເຊິ່ງປະ ກອບມີພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້

ເມືອງ ແລະ ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ.

**ມາດຕາ 19 ໜ້າທີ່, ຄວາມຮັບຜິດຊອບ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ**

ພະແນກກະສິກຳ ແລະ ປ່າໄມ້ແຂວງ ຮັບຜິດຊອບຄຸ້ມຄອງວຽກງານປ່າສະຫງວນ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ອົງການປົກຄອງແຂວງໃນການຊີ້ນຳ, ນຳພາການວາງແຜນຈັດສັນ, ຄຸ້ມຄອງ, ກວດກາ ແລະ ຈັດຕັ້ງປະຕິບັດວຽກງານປ່າສະຫງວນຕາມສາຍຕັ້ງ, ສາຍຂວາງ ໂດຍການປະສານສົມທົບກັບບັນດາພະແນກການອ້ອມຂ້າງແຂວງ, ອົງການປົກຄອງເມືອງ, ບ້ານ ແລະ ການຈັດຕັ້ງກ່ຽວຂ້ອງ;
2. ຄົ້ນຄ້ວາມີຄຳເຫັນໃຫ້ຂັ້ນເທິງພິຈາລະນາ ກ່ຽວກັບການພັດທະນາ ຫຼື ການດຳເນີນກິດຈະການຕ່າງໆໃນເຂດປ່າສະຫງວນ;
3. ຈັດຕັ້ງໜ່ວຍງານຄຸ້ມຄອງປ່າສະຫງວນ, ປະສານສົມທົບກັບໜ່ວຍງານທີ່ກ່ຽວຂ້ອງເພື່ອປຸກລະດົມ, ປູກຈິດສຳນຶກ ໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າໃຫ້ຮູ້ຮັກຫອມ ແລະ ປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມ ໃນພື້ນທີ່ປ່າສະຫງວນ;
4. ເກັບກຳຂໍ້ມູນດ້ານປ່າໄມ້, ທີ່ດິນປ່າໄມ້, ສ້າງປຶ້ມບັນທຶກມອບຄວາມຮັບຜິດ

ຊອບໃຫ້ບ້ານ ແລະ ຄອບຄົວມີສ່ວນຮ່ວມໃນການປົກປັກຮັກສາ ແລະ ຄຸ້ມຄອງ ຊັບພະຍາກອນປ່າໄມ້, ສັດນ້ຳ-ສັດປ່າ;

5. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນ, ສ້າງແຜນເຄື່ອນໄຫວວຽກງານປະຈຳງວດ, ປະຈຳ 6 ເດືອນ ແລະ ປະຈຳປີໃຫ້ຂັ້ນເທິງ;
6. ປະຕິບັດໜ້າທີ່ອື່ນໆຕາມກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 20 ໜ້າທີ່, ຄວາມຮັບຜິດຊອບ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຮັບຜິດຊອບຄຸ້ມຄອງວຽກງານປ່າ ສະຫງວນ ດັ່ງນີ້:

1. ຊຸກຍູ້, ຕິດຕາມ, ຊີ້ນຳ ໜ່ວຍງານປ່າໄມ້ເມືອງ ແລະ ປ່າໄມ້ບ້ານໃຫ້ຄວາມ ຮ່ວມມື ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການ ລົງຈັດຕັ້ງປະຕບັດ ວຽກງານຄຸ້ມຄອງປ່າສະຫງວນ;
2. ສົມທົບກັບອົງການປົກຄອງບ້ານ, ລົງໂຄສະນາເຜີຍແຜ່ ແລະ ຜັນຂະຫຍາຍນິຕິ ກຳທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງປ່າສະຫງວນ;
3. ໃຫ້ຄຳແນະນຳ, ປຸກລະດົມ ແລະ ສົ່ງເສີມປະຊາຊົນເຂົ້າຮ່ວມ ເປັນເຈົ້າການໃນ ການປົກປັກຮັກສາປ່າສະຫງວນ;
4. ເກັບກຳຂໍ້ມູນດ້ານປ່າໄມ້, ທີ່ດິນປ່າໄມ້, ສ້າງບົດບັນທຶກມອບຄວາມຮັບຜິດຊອບ ໃຫ້ບ້ານ ແລະ ຄອບຄົວ ມີສ່ວນຮ່ວມປົກປັກຮັກສາ ແລະ ຄຸ້ມຄອງຊັບພະ ຍາ ກອນປ່າໄມ້, ສັດນ້ຳ-ສັດປ່າ;
5. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ່າສະຫງວນໃຫ້ຂັ້ນ ເທິງ ຕາມສາຍຕັ້ງ, ສາຍຂວາງເປັນປົກກະຕິ;
6. ປະຕິບັດໜ້າທີ່ອື່ນໆຕາມກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 21 ໜ້າທີ່, ຄວາມຮັບຜິດຊອບ ຂອງໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ**

ໜ່ວຍງານກະສິກຳ ແລະ ປ່າໄມ້ບ້ານ ຮັບຜິດຊອບຄຸ້ມຄອງວຽກງານປ່າ ສະຫງວນ ດັ່ງນີ້:

1. ໂຄສະນາເຜີຍແຜ່, ເຊື່ອມຊຶມ ແລະ ສຶກສາອົບຮົມ ໃຫ້ປະຊາຊົນພາຍໃນບ້ານ ເຂົ້າໃຈຕໍ່ລະບຽບ, ກົດໝາຍ ແລະ ນະໂຍບາຍຕ່າງໆກ່ຽວກັບການຄຸ້ມຄອງປ່າ ສະຫງວນ;

2. ຈັດຕັ້ງລະບົບການຄຸ້ມຄອງ, ຕິດຕາມ, ກວດກາ ເກັບກຳສະພາບການປ່າໄມ້ ແລະ ທີ່ດິນປ່າໄມ້ໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ເປັນເຈົ້າການຕິດຕາມ, ກວດກາ, ສະກັດກັ້ນ ແລະ ຕ້ານທຸກການເຄື່ອນໄຫວທີ່ບໍ່ດີ ເຊັ່ນ: ການບຸກລຸກເນື້ອທີ່ດິນປ່າໄມ້, ການລັກລອບຕັດໄມ້, ການຖາງປ່າ, ຈູດປ່າ, ລ່າເນື້ອ, ຂຸດເຈາະດິນ ແລະ ອື່ນໆ ທີ່ສົ່ງຜົນກະທົບ ແລະ ກໍ່ຄວາມເສຍຫາຍຕໍ່ຊັບພະຍາກອນປ່າສະຫງວນຂອງແຂວງ;;
3. ໃຫ້ຄວາມຮ່ວມມືອຳນວຍຄວາມສະດວກ ຕໍ່ພະນັກງານວິຊາການທີ່ກ່ຽວຂ້ອງ ທີ່ຖືກແຕ່ງຕັ້ງໃຫ້ລົງມາຕິດຕາມ, ກວດກາ, ເກັບກຳຂໍ້ມູນ ຫຼື ມາປະຕິບັດໜ້າທີ່ວຽກງານຕ່າງໆ ກ່ຽວກັບການຄຸ້ມຄອງປ່າສະຫງວນ;
4. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ກວດກາປ່າສະຫງວນ ແລະ ສະພາບການຕ່າງໆຂອງປ່າສະຫງວນໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງເປັນປົກກະຕິ;
5. ປະຕິບັດໜ້າທີ່ອື່ນໆຕາມກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 22 ຄວາມຮັບຜິດຊອບ ຂອງພາກສ່ວນອື່ນໆ**

1. ໃຫ້ຄວາມຮ່ວມມືນຳອຳນາດການປົກຄອງບ້ານ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງປ່າສະຫງວນຂອງແຂວງ;
2. ເປັນເຈົ້າການປ້ອງກັນ, ສະກັດກັ້ນ ແລະ ຕ້ານ ການເຄື່ອນໄຫວທີ່ບໍ່ຖືກຕ້ອງ ເຊັ່ນ: ການບຸກລຸກເນື້ອທີ່ດິນປ່າໄມ້, ການລັກລອບຕັດໄມ້, ການຖາງປ່າ, ຈູດປ່າ, ລ່າເນື້ອ, ຂຸດເຈາະດິນ ແລະ ອື່ນໆ ທີ່ສົ່ງຜົນກະທົບ ແລະ ກໍ່ຄວາມເສຍຫາຍຕໍ່ຊັບພະຍາກອນປ່າສະຫງວນຂອງແຂວງ;
3. ປະກອບສ່ວນໃນການຕິດຕາມ, ກວດກາ ແລະ ລາດຕະເວນ ຖ້າຫາກພົບເຫັນການກະທຳສິ່ງທີ່ບໍ່ຖືກຕ້ອງ ໃຫ້ລາຍງານຕໍ່ພະນັກງານປ່າໄມ້ບ້ານ, ອົງການປົກຄອງບ້ານ ຫຼື ພະນັກງານວິຊາການທີ່ກ່ຽວຂ້ອງ;
4. ປະຕິບັດສິດ ແລະ ພັນທະຕ່າງໆຕາມກົດໝາຍ.

**ມາດຕາ 23 ອົງການກວດກາປ່າສະຫງວນຂອງແຂວງ**

ອົງການກວດກາປ່າສະຫງວນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງປ່າສະຫງວນ.

**ມາດຕາ 24 ການກວດກາປ່າສະຫງວນຂອງແຂວງ**

ອົງການກວດກາປ່າສະຫງວນມີໜ້າທີ່ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງບ້ານ, ກຸ່ມບ້ານດຳເນີນການກວດກາໂດຍການຈັດຕັ້ງໜ່ວຍກວດກາຢູ່ຕາມຈຸດຫຼໍ່ແຫຼມ ແລະ ເສັ້ນທາງເຂົ້າ- ອອກປ່າສະຫງວນ, ກວດກາລາດຕະເວນຢູ່ພາຍໃນ ແລະ ອ້ອມຮອບປ່າສະຫງວນ.

ການກວດກາໃຫ້ດຳເນີນຢ່າງເປັນປົກກະຕິ, ກວດກາຕາມການລາຍງານ ແລະ ກວດກາແບບກະທັນຫັນໃນກໍລະນີມີເຫດການເກີດຂຶ້ນ ເຊັ່ນ: ການຖາງປ່າເຮັດໄຮ່, ການລັກ ລອບຕັດໄມ້, ການລ່າສັດນ້ຳ-ສັດປ່າ, ການເກັບກູ້ເຄື່ອງປ່າຂອງດົງ ຫຼື ມີການດຳເນີນກິດຈະການອື່ນໆ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແມ່ນຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍຕາມຄວາມເໝາະສົມ.

**ມາດຕາ 26 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ຈະຖືກຕກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ປະຕິບັດໂທດທາງອາຍາ ຕາມແຕ່ລະກໍລະນີ ດັ່ງນີ້:

1. ລະເມີດບັນດາຂໍ້ຫ້າມທີ່ໄດ້ລະບຸໄວ້ໃນມາດຕາ 16, 17 ຂອງຂໍ້ຕົກລົງສະບັບນີ້ເປັນຄັ້ງທຳອິດ ເຊິ່ງກໍ່ໃຫ້ມີຜົນເສຍຫາຍມີມູນຄ່າຕ່ຳກວ່າ 1.000.000 ກີບ ແມ່ນຈະໄດ້ປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ ແລະ ບັນທຶກປະຫວັດການກະທຳຜິດໄວ້ໃນສຳນວນຄະດີ.
2. ລະເມີດບັນດາຂໍ້ຫ້າມທີ່ໄດ້ລະບຸໄວ້ໃນມາດຕາ 16, 17 ຂອງຂໍ້ຕົກ ລົງສະບັບນີ້ເປັນຄັ້ງທີ 2 ເຊິ່ງກໍ່ໃຫ້ມີຜົນເສຍຫາຍມີມູນຄ່າ 1.000.000 ກີບຂຶ້ນໄປ ແຕ່ບໍ່ແມ່ນການກະທຳຜິດທາງອາຍາ ແມ່ນຈະໄດ້ປະຕິບັດມາດຕະການປັບໃໝ ຄູນສອງຂອງມູນຄ່າເສຍຫາຍ ແລະ ບັນທຶກປະຫວັດການກະທຳຜິດໄວ້ໃນສຳນວນຄະດີ.

3. ລະເມີດບັນດາຂໍ້ຫ້າມທີ່ໄດ້ລະບຸໄວ້ໃນມາດຕາ 16, 17 ຂອງຂໍ້ຕົກ ລົງສະບັບນີ້ ຢ່າງຮ້າຍແຮງ, ມີມູນຄ່າເສຍຫາຍ 2.000.000 ກີບ ຂຶ້ນໄປ ແລະ ເປັນການກະທຳຜິດທີ່ບໍ່ເຂັດຫຼາບ ແມ່ນຈະໄດ້ປະຕິບັດມາດຕະການທາງອາຍາ ແລະ ໃຊ້ແທນຄ່າເສຍຫາຍທາງແພ່ງຕາມກົດໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 27 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ບັນດາອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ດຳລົງຊີວິດ, ດຳເນີນທຸລະກິດ ຫຼື ພວມປະຕິບັດໜ້າທີ່ວຽກງານຢູ່ແຂວງບໍ່ແກ້ວ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 28 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຕ່າງໆ ທີ່ບໍ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງແຂວງບໍ່ແກ້ວ**

ແຂວງ ບໍ່ແກ້ວ
ເຈົ້າແຂວງ

ປອ ຄຳພັນ ເຜີຍຍະວົງ